ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ວັດທະນະຖາວອນ
໑໑໑ ▢▢▢ ໑໑໑

ນະຄອນຫຼວງວຽງຈັນ
ພະແນກການເງິນ

ເລກທີ 04 /ກງ.ນວ
ລົງວັນທີ 24 JUN 2013

# ລະບຽບ

## ການຈົດທະບຽນເອກະສານ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ ສະບັບເລກທີ 14 / ສພຊ,ລົງວັນທີ 5 ກໍລະກົດ 2012.
- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສາທາລະນະປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 03/ ປປທ, ລົງວັນທີ 19 ພະຈິກ 2008, ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ .
- ອີງຕາມ ແຈ້ງການແນະນຳຂອງທ່ານລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1325 / ກງ,ລົງວັນທີ 20 ພຶດສະພາ 2013 ກ່ຽວກັບການເພີ່ມຈຸດບໍລິການຈົດທະບຽນເອກະສານຂອງຂະແໜງຄຸ້ມຄອງຊັບສິນຂອງລັດ.
- ອີງຕາມ ແຈ້ງການຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 281 /ຈນວ,ລົງວັນທີ 13 ພຶດສະພາ 2013.
- ອີງຕາມ ແຈ້ງການຂອງຫ້ອງການກະຊວງການເງິນສະບັບເລກທີ 1158/ກງ.ຫກ,ລົງວັນທີ 12 ມິຖຸນາ 2013.

ພະແນກການເງິນນະຄອນຫຼວງວຽງຈັນ ແຈ້ງມາຍັງບັນດາທ່ານຊາບວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການຈົດທະບຽນເອກະສານ ຊື້-ຂາຍ, ແລກປ່ຽນ, ນຳເຂົ້າ-ສົ່ງ ອອກສິນຄ້າ ແລະ ເຄື່ອງຂອງປະເພດຕ່າງໆ ປະຈຳຢູ່ ສາງສິນຄ້າຜ່ານແດນທ່ານາແລ້ງ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມເປັນເອກະພາບກັບບັນດາຂະແໜງການກ່ຽວຂ້ອງ ແລະ ໃຫ້ລະບົບເອກະສານມີຄວາມຕໍ່ເນື່ອງ ທັງຮັບປະກັນຕໍ່ການບໍລິການໃຫ້ຄວາມສະດວກວ່ອງໄວ ແກ່ຜູ້ປະກອບ(ຊົບປີ້ງ) ຈຶ່ງແນະນຳມາຍັງທ່ານເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

### I. ດ້ານເອກະສານ:

1. ທຸກໆເອກະສານ ຊື້-ຂາຍ,ແລກປ່ຽນ,ນຳເຂົ້າ-ສົ່ງອອກສິນຄ້າ ແລະເຄື່ອງຂອງປະເພດຕ່າງໆ ພາຍຫລັງເອກະສານໄດ້ເຊັນຜ່ານຄະນະດ່ານພາສີສາກົນຂົວມິດຕະພາບ 01 ສາງທ່ານາແລ້ງ ແລ້ວໃຫ້ນຳເອກະສານ ດັ່ງກ່າວນັ້ນມາຈົດທະບຽນ ນຳໜ່ວຍງານຄຸ້ມຄອງຊັບສິນຂອງລັດ ທີ່ປະຈຳຢູ່ສາງສິນຄ້າຜ່ານແດນທ່ານາແລ້ງນັ້ນເສຍກ່ອນ.ຈຶ່ງຖືກວ່າຕ້ອງຕາມລະບຽບກົດໝາຍ .ເຊິ່ງຈະໄດ້ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 01/07/2013 ເປັນຕົ້ນໄປ.
2. ເອກະສານທີ່ນຳມາຈົດທະບຽນ ໃຫ້ປະກອບສຳເນົາເພີ່ມອີກ 01 ຊຸດ .

### II. ອັດຕາຄ່າທຳນຽມໃນການຈົດທະບຽນ:

ໄດ້ກຳນົດໄວ້ໃນ ມາດຕາ06: ຂອງລັດຖະບັນຍັດປະທານປະເທດ ສະບັບເລກທີ 03 /ປປທ,ລົງວັນທີ 19/11/2008 ເຊິ່ງມີລາຍລະອຽດດັ່ງນີ້:

1. ບັນດາເອກະສານທີ່ພົວພັນລະຫວ່າງລັດ ແລະ ເອກະຊົນ ທີ່ນຳໃຊ້ງົບປະມານຂອງລັດ,ເງິນຊ່ວຍເຫຼືອລ້າ,ກູ້ຢືມພາຍໃນແລະຕ່າງປະເທດ,ໜັງສືມອບກຳມະສິດສືບທອດມູນມໍລະດົກ,ບົດບັນທຶກແບ່ງປັນຫຸ້ນບໍລິສັດທີ່ຖືກຫຍຸບໃຫ້ແກ່ຂາຮຸ້ນ,ບົດບັນທຶກແບ່ງປັນຊັບລະຫວ່າງຜູ້ມີກຳມະສິດຮ່ວມ,ສັນຍາການຊື້-ຂາຍສັດ ຫຼື ຜົນຜະລິດກະສິກຳທຸກປະເພດ.ປະຕິບັດຕາມອັດຕາດຽວ 20.000 ກີບ.
2. ອັດຕາການເກັບຄ່າຈົດທະບຽນແບບເດັດຖານຕາມມູນຄ່າຊັບ ເກັບດັ່ງນີ້:
   - ❖ ການໂອນກຳມະສິດ.

| ລາຍການ | 10 ລ້ານກີບລົງມາ | 10,1-50 ລ້ານກີບ | 50,1-100 ລ້ານກີບ | 100,1ລ້ານກີບຂຶ້ນໄປ |
|---|---|---|---|---|
| - ສັນຍາຊື້-ຂາຍຍານພາຫະນະ,ອຸປະກອນເຄື່ອງໃຊ້ ທຸກປະເພດ ແລະເຄື່ອງຈັກປະເພດຕ່າງໆ ຊື້ເຂົ້າມາໃໝ່ | 50.000 | 250.000 | 500.000 | 1.000.000 |
| - ສັນຍາຊື້-ຂາຍພາຫະນະ,ເຄື່ອງຈັກປະເພດຕ່າງໆທີ່ນຳໃຊ້ຢູ່ ສປປ ລາວແລ້ວ, ອຸປະກອນເຄື່ອງໃຊ້ທຸກປະເພດ ແລະ ການຊື້-ຂາຍໄມ້,ຜລິດຕະພັນໄມ້,ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບອອກຕ່າງປະເທດ,ໄມ້ທ່ອນ,ໄມ້ກິ່ງງ່າ,ຕໍໄມ້. | 100.000 | 500.000 | 1.000.000 | 2.000.000 |

❖ ເອກະສານ ຫຼື ສັນຍາ ປະເພດຮັບເໝົາກໍ່ສ້າງ, ສ້ອມແປງ, ອອກແບບ, ຕິດຕາມກວດກາກໍ່ສ້າງ, ການຄ້າ - ການບໍລິການ ແລະ ປະເພດ ອື່ນໆ.

| ມູນຄ່າໂຄງການ | ກີບ / ຄັ້ງ |
|---|---|
| 500.000 ກີບ ລົງໄປ | 20.000 |
| 500.001 ກີບ ຫາ 5.000.000 ກີບ | 25.000 |
| 5.000.001 ກີບ ຫາ 25.000.000 ກີບ | 30.000 |
| 25.000.001 ກີບ ຫາ 50.000.000 ກີບ | 50.000 |
| 50.000.001 ກີບ ຫາ 100.000.000 ກີບ | 100.000 |
| 100.000.001 ກີບ ຫາ 250.000.000 ກີບ | 250.000 |
| 250.000.001 ກີບ ຫາ 500.000.000 ກີບ | 500.000 |
| 500.000.001 ກີບ ຫາ 1.000.000.000 ກີບ | 1.000.000 |
| 1000.000.001 ກີບ ຫາ 3.000.000.000 ກີບ | 2.000.000 |
| 3.000.000.001 ກີບ ຫາ 5.000.000.000 ກີບ | 4.000.000 |
| 5.000.000.001 ກີບ ຫາ 10.000.000.000. ກີບ | 7.000.000 |
| 10.000.000.001 ກີບ ຫາ 25.000.000.000 ກີບ | 17.750.000 |
| 25.000.000.001 ກີບ ຫາ 50.000.000.000. ກີບ | 37.500.000 |
| 50.000.000.001 ກີບ ຂຶ້ນໄປ | 75.000.000 |

III. <u>ມາດຕະການຕໍ່ຜູ້ລະເມີດ:</u>

ຖ້າຫາກເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ມີການກວດກາພົບເຫັນຕໍ່ການລະເມີດດັ່ງກ່າວຈະໄດ້ປະຕິບັດຕາມ ມາດຕາ 66 ,67 ແລະ 69 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ ສະບັບເລກທີ 14 / ສພຊ,ລົງວັນທີ 5 ກໍລະກົດ 2012.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງພາກສ່ວນກ່ຽວຂ້ອງຊາບ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄັ້ງນີ້ດ້ວຍ

ຫົວໜ້າພະແນກການເງິນນະຄອນຫຼວງວຽງຈັນ.

ພະແນກ ການເງິນ ນະຄອນຫລວງ

ຄຳພັນ ມາລາບັນດິດ

Khamphanh MALABANDITH

ສອບຖາມຂໍ້ມູນເພີ່ມເຕີມ 02022227249

| | | | | |
|---|---|---|---|---|
| ສັນຍາປະກັນໄພຕ່າງໆ | 10.000 | 20.000 | 25.000 | 50.000 |
| ສັນຍາຄ້ຳປະກັນ (ສັງຫາລິມະຊັບ) ຫລື ບຸກຄົນ | 5.000 | 10.000 | 15.000 | 20.000 |
| ສັນຍາການດຳເນີນການສຳຫລວດ ອອກແບບຕ່າງໆ. | 5.000 | 10.000 | 15.000 | 20.000 |

7. ສັນຍາຮັບເໝົາກໍ່ສ້າງ, ສ້ອມແປງ, ອອກແບບ, ຕິດຕາມກວດກາກໍ່ສ້າງ ແລະ ບໍລິການຕ່າງໆ.

| ມູນຄ່າໂຄງການ | ກີບ/ຄັ້ງ |
|---|---|
| 500.000 ກີບ ລົງໄປ | 20.000 |
| 500.001 ກີບ ຫາ 5.000.000 ກີບ | 25.000 |
| 5.000.001 ກີບ ຫາ 25.000.000 ກີບ | 30.000 |
| 25.000.001 ກີບ ຫາ 50.000.000 ກີບ | 50.000 |
| 50.000.001 ກີບ ຫາ 100.000.000 ກີບ | 100.000 |
| 100.000.001 ກີບ ຫາ 250.000.000 ກີບ | 250.000 |
| 250.000.001 ກີບ ຫາ 500.000.000 ກີບ | 500.000 |
| 500.000.001 ກີບ ຫາ 1.000.000.000 ກີບ | 1.000.000 |
| 1.000.000.001 ກີບ ຫາ 3.000.000.000 ກີບ | 2.000.000 |
| 3.000.000.001 ກີບ ຫາ 5.000.000.000 ກີບ | 4.000.000 |
| 5.000.000.001 ກີບ ຫາ 10.000.000.000 ກີບ | 7.000.000 |
| 10.000.000.001 ກີບ ຫາ 25.000.000.000 ກີບ | 17.750.000 |
| 25.000.000.001 ກີບ ຫາ 50.000.000.000 ກີບ | 37.5 00.000 |
| 50.000.000.001 ຂຶ້ນໄປ | 75.000.000 |

8. ຄ່າຂຶ້ນທະບຽນບັນຊີພາຫະນະ ແລະ ພັດສະດຸ

| ມູນຄ່າ | ກີບ/ຄັ້ງ |
|---|---|
| ຫລຸດ 20.000.000 ກີບ | 20.000 ກີບ |
| 20.000.001 ກີບຫາ 40.000.000 ກີບ | 40.000 ກີບ |
| 40.000.001 ກີບຫາ 80.000.000 ກີບ | 80.000 ກີບ |
| 80.000.001 ກີບຫາ 120.000.000 ກີບ | 120.000 ກີບ |
| 120.000.001 ກີບຫາ 140.000.000 ກີບ | 140.000 ກີບ |
| 140.000.001ກີບຫາ 160.000.000 ກີບ | 160.000 ກີບ |
| 160.000.001 ກີບ ຫາ 180.000.000 ກີບ | 180.000 ກີບ |
| 180.000.001 ກີບ ຫາ 200.000.000 ກີບ | 200.000 ກີບ |